## ໂຄງການສົ່ງເສີມການປູກພືດອາຫານສັດໃຫ້ແກ່ຄອບຄົວຊາວກະສິກອນ (FSP)

ໂຄງການສົ່ງເສີມການປູກພືດອາຫານສັດໃຫ້ແກ່ຄອບຄົວຊາວກະສິກອນ (FSP) ແມ່ນ ໂຄງການ ປະສານງານ ລະຫວ່າງ ຊາວກະສິກອນ, ນັກຄົ້ນຄ້ວາທົດລອງ ແລະ ນັກພັດທະນາກອນ ຢູ່ ສ ປ ປ ລາວ, ຫວຽດ ນາມ, ຈີນ, ອິນໂດເນເຊຍ, ຟີລິບປິນ, ມາເລເຊຍ ແລະ ໄທ. ໂຄງການ ໄດ້ສຸມໃສ່ການພັດທະນາ ເຕັກໂນໂລຊີພືດ ອາຫານສັດ ຮ່ວມກັບຊາວກະສິກອນທີ່ຢູ່ ໃນເຂດພູດອຍ, ຊຶ່ງເປັນເຂດ ທີ່ພືດອາຫານສັດ ມີຄວາມສຳຄັນ ແລະ ເປັນທ່າແຮງໃນການປັບປຸງອາຫານສັດ ແລະ ການຄຸ້ມຄອງຊັບພະຍາກອນ ທຳມະຊາດ.

ນັບແຕ່ປີ 1995 ຫາ 1999, ໂຄງການສົ່ງເສີມການປູກພືດອາຫານສັດສຳລັບ ຊາວກະສິກອນແມ່ນ ໄດ້ຮັບທຶນຊ່ວຍເຫລືອ ຈາກ ອົງການຊ່ວຍເຫລືອສາກົນ ຂອງ ອົດສະຕາລີ (AusAID) ແລະ ບໍລິຫານໂດຍ ສູນຄົ້ນຄ້ວາກະສິກຳເຂດຮ້ອນ (CIAT) ແລະ ອົງການຄົ້ນຄ້ວາວິທະຍາສາດ ແລະ ອຸດສາຫະກຳ ຂອງ ອົດສະຕາລີ (CSIRO). ເພື່ອເປັນການສືບຕໍ່ໂຄງການ, ທະນາຄານພັດທະນາອາຊີ ໄດ້ໃຫ້ ທຶນແກ່ໂຄງການໃນໄລຍະສາມ ຊຶ່ງໄດ້ ເລີ່ມໃນປີ 2003 ໂດຍແມ່ນ ສູນຄົ້ນຄ້ວາ ກະສິກຳເຂດຮ້ອນ (CIAT) ເປັນຜູ້ຄຸ້ມຄອງ ແລະ ບໍລິຫານ.

NAFRI CIAT ACIAR CSIRO AusAID ADB

# ການພັດທະນາ ທາງເລືອກດ້ານກະສິກຳ
# ຮ່ວມກັບ ຊາວກະສິກອນ

# ການພັດທະນາ ທາງເລືອກດ້ານກະສິກຳ ຮ່ວມກັບ ຊາວກະສິກອນ

## ຈະເລີ້ມຕົ້ນແນວໃດ ກັບວິທີການແບບມີສ່ວນຮ່ວມ

ປີເຕີ ຮອນ ແລະ ເວີນເນີ ສະເຕືອ

ແປ ແລະ ຮຽບຮຽງ ໂດຍ ພອນປະເສີດ ເພັງສະຫວັນ,
ວຽງສະຫວັນ ພົມພະຈັນວົງສິດ ແລະ ວຽງໄຊ ໂພຕະກຸນ
ຈັດພິມ ໂດຍ ສູນຄົ້ນຄ້ວາກະສິກຳສາກົນ ຂອງ ອົດສະຕາລີ
(ACIAR) ແລະ ສູນຄົ້ນຄ້ວາກະສິ ກຳ ເຂດຮ້ອນສາກົນ (CIAT).
ACIAR monograph No. 103

**ສູນຄົ້ນຄ້ວາກະສິກຳສາກົນ ຂອງ ອົດສະຕາລີ (ACIAR)**
GPO Box 1571
Canberra, ACT 2601
Australia
Tel: (61 2) 6217 0500
Fax: (61 2) 6217 0501
E-mail: aciar@aciar.gov.au

**ອົງການຊ່ວຍເຫລືອສາກົນຂອງອົດສະຕາລີ (AusAID)**
GPO Box 887,
Canberra, ACT 2601
Australia
Tel: (61 2) 6206 4000
Fax: (61 2) 6206 4880
E-mail: infoausaid@ausaid.gov.au

**ສູນຄົ້ນຄ້ວາກະສິກຳເຂດຮ້ອນສາກົນ (CIAT)** / ໂຄງການສົ່ງເສີມການປູກພືດອາຫານສັດສຳລັບຄອບຄົວຊາວ ກະສິກອນ (FSP)
P.O. Box 783
ວຽງຈັນ, ສ ປ ປ ລາວ
Tel: (856 21) 770090
Fax: (856 21) 770091
E-mail: ciat-asia@cgiar.org

**ISBN 1-86320-379-6**

ປີເຕີ ຮອນ ແລະ ເວີນເນີ ສະເຕືອ (2003) ແປ ແລະ ຮຽບຮຽງໂດຍ ພອນປະເສີດ ເພັງສະຫວັນ, ວຽງສະຫວັນ ພົມພະຈັນວົງສິດ ແລະ ວຽງໄຊ ໂພຕະກຸນ. ການພັດທະນາທາງເລືອກດ້ານກະສິກຳຮ່ວມກັບຊາວກະສິກອນຈະເລີ້ມຕົ້ນແນວໃດ ກັບວິທີການແບບມີສ່ວນຮ່ວມ.ACIAR Monograph No. 103. 120 pp.

ແຕ້ມຮູບກະຕູນປະກອບ ໂດຍ ເດັບ ດານຽນ (Dave Daniel), ອົດສະຕາລີ.

ອອກແບບຫນ້າປົກ ໂດຍ ຕົ່ງຄຳ ແສງອາໄພ, ສ ປ ປ ລາວ

ປື້ມແນະນຳສະບັບນີ້ ແມ່ນ ສະບັບທີ່ 3 ໃນຊຸດການຄົ້ນຄ້ວາທົດລອງ ສຳລັບ ການພັດທະນາ ຂອງ ສູນຄົ້ນຄ້ວາກະສິກຳເຂດຮ້ອນ (CIAT). ປື້ມສອງຫົວທຳອິດ ແມ່ນກ່ຽວກັບ "ການພັດທະນາເຕັກໂນໂລຊີພືດອາຫານສັດ ຮ່ວມກັບຊາວກະສິກອນຈະຄັດເລືອກພັນ ພືດອາຫານສັດສຳລັບຊາວກະສິກອນ ໃນອາຊີຕາເວັນອອກສ່ຽງໃຕ້ ໄດ້ແນວໃດ" ແລະ "ການພັດທະນາເຕັກໂນໂລຊີພືດອາຫານສັດ ຮ່ວມກັບຊາວກະສິກອນຈະປູກ, ຄຸ້ມຄອງ ແລະ ນຳໃຊ້ພືດອາຫານ ແນວໃດ". ປື້ມທັງສາມສະບັບນີ້ ແມ່ນໄດ້ຖືກຈັດພິມເປັນຫລາຍພາສາ ເຊັ່ນ: ລາວ, ຫວຽດນາມ, ຈີນ, ອິນໂດເນເຊຍ, ຟີລິບປິນ, ອັງກິດ, ຂະແມ ແລະ ໄທ.



# ສາລະບານ


**ຄຳຂອບໃຈ**

**1 ກ່ອນທີ່ທ່ານຈະເລີ່ມຕົ້ນ 9**

**2 ເປັນຫຍັງ ຈຶ່ງຕ້ອງໄດ້ນຳໃຊ້ວິທີການແບບມີສ່ວນຮ່ວມ? 13**

**3 ວິທີການແບບມີສ່ວນຮ່ວມ ເປັນວິທີການທີ່ໄດ້ຮັບຜົນສຳລັບພວກເຮົາ 19**

ການຄັດເລືອກບ້ານ 25

ການຕົກລົງກ່ຽວກັບບັນຫາ-ການວິເຄາະບັນຫາແບບມີສ່ວນຮ່ວມ 30

ການຊອກຫາທາງເລືອກດ້ານເຕັກໂນໂລຊີ ຮ່ວມກັບກຸ່ມສະເພາະ 42

ການທົດສອບ ແລະ ປະເມີນທາງເລືອກຕ່າງ ໆເລີ່ມຕົ້ນໃນລະດັບນ້ອຍ 47

ການຈັດກອງປະຊຸມບ້ານ 57

ການປະສົມປະສານທາງເລືອກທີ່ດີທີ່ສຸດ ເຂົ້າໃນການຜະລິດ 60

ການເຂົ້າເຖິງຊາວກະສິກອນຜູ້ໃໝ່ ພາຍໃນບ້ານ 64

ການແລກປ່ຽນຜົນສຳເລັດໃນການນຳໃຊ້ເຕັກໂນໂລຊີ ຮ່ວມກັບບ້ານອື່ນ 67

# ຄຳຂອບໃຈ

ປື້ມຫົວນີ້ແມ່ນໄດ້ຂຽນຂື້ນບົນພື້ນຖານປະສົບການຂອງ ນັກຄົ້ນຄ້ວາທົດລອງ ແລະ ຊາວກະສິກອນທີ່ເຮັດວຽກຮ່ວມກັນ ໃນໂຄງການສົ່ງເສີມການປູກ ພືດອາຫານສັດ ສຳລັບຄອບຄົວຊາວກະສິກອນ (FSP) ໂດຍໄດ້ຮັບທຶນ ຊ່ວຍເຫລືອຈາກ ອົງການຊ່ວຍເຫລືອສາກົນຂອງອົດສະຕາລີ (AusAID), ຊຶ່ງ ດຳເນີນມາແຕ່ປີ 1995 ຫາ 1999 ໃນອາຊີຕາເວັນອອກສ່ຽງໃຕ້. ໂຄງການ ດັ່ງກ່າວ, ຖືວ່າເປັນໂຄງການຮ່ວມມື ລະຫວ່າງຊາວກະສິກອນ, ພະນັກງານ ສົ່ງ ເສີມ ແລະ ນັກຄົ້ນຄ້ວາທົດລອງຜູ້ທີ່ພັດທະນາເຕັກໂນໂລຊີ ພືດອາຫານສັດຮ່ວມກັນ ໂດຍນຳໃຊ້ ວິທີການເຮັດວຽກແບບມີສ່ວນຮ່ວມ. (ສຳລັບລາຍ ລະອຽດກະລຸນາເບິ່ງເບື້ອງຫລັງ ຂອງຫນ້າປົກ). ວຽກງານດັ່ງກ່າວນີ້ ແມ່ນໄດ້ ສືບຕໍ່ໂດຍສອງໂຄງການເຊັ່ນ ໂຄງການພາກພື້ນ ໂດຍແມ່ນທະນາຄານ ພັດທະນາອາຊີ (ADB) ເປັນຜູ້ໃຫ້ທຶນ ແລະ ອີກໂຄງການ ແມ່ນໂຄງການ ສະເພາະໃນ ສປປ ລາວ ໂດຍການໃຫ້ທຶນ ຈາກ ອົງການຊ່ວຍເຫລືອສາກົນ ຂອງ ອົດສະຕາລີ.

ໃນການພັດທະນາ ແລະ ຈັດພິມປື້ມດັ່ງກ່າວນີ້ ແມ່ນໄດ້ມີ ການປະກອບສ່ວນຂອງ ຫລາຍ ໆ ທ່ານ, ດັ່ງນັ້ນຈຶ່ງຂໍສະແດງຄວາມ ຂອບໃຈແບບພິເສດ ໄປຍັງພະນັກງານທີ່ເຮັດວຽກຮ່ວມກັບໂຄງການ, ຊຶ່ງລວມ ມີ: ວຽງສະຫວັນ ພົມພະຈັນວົງສິດ, ພອນປະເສີດ ເພັງສະ ຫວັນ, ວຽງໄຊ ໂພຕະກຸນ, ສຸລິວັນ ໂນວາຫາ, ທົງທອງ ພົມມະສານ, ຄຳໄຜ່ ພູມມະວົງ, ເພັງ ຄຳມະວົງ, ແສງປະສິດ ທອງສະຫວັດ, ວັນທອງ ແພງວິຈິດ, Le Van An, Bui Xuan An, Perla Asis, Le Hoa Binh, Francisco Gabunada, Heriyanto, Ibrahim, Tatang Ibrahim, Peter Kerridge, Truong Tan Khanh, Elaine Lanting, Eduedo Magboo, Willie Nacalaban, Ganda Nakhammanee, Chaisaeng Phaikew, Tugiman, Maimunah Tuhulele ແລະ Vu Thi Hai Yen.



ພ້ອມນີ້ຂໍຂອບໃຈ ມາຍັງທ່ານ Ann Broun, John Connell, Bryan Hacker and Peter Kerridge, Rod Lefroy, Peter Lynch, Jenny Owen, Ralph Roothaert ແລະ Nathan Russell, ຜູ້ທີ່ໄດ້ປະກອບຄຳຄິດ ຄຳເຫັນ ເຂົ້າໃນການຂຽນປື້ມຫົວນີ້. ນອກນັ້ນ, ຍັງຂໍສະແດງຄວາມຂອບໃຈ ຕໍ່ທ່ານ Paul Bloxham ສຳລັບການກະກຽມ ແລະ ອອກແບບ, ທ່ານ Jim Holmes, Peter Horne, Luis Fernando Pino, Tim Purcell, Nathan Russell, Werner Stur, Gerry Toomey ແລະ Maimuna Tuhulele ໃນຄວາມ ຕັ້ງໃຈ ໃນ ການລິເລີ່ມ ຂອງ ເຂົາເຈົ້າ.

ຂໍຂອບໃຈມາຍັງທ່ານ Dave Daniel ສຳລັບການແຕ້ມຮູບກະຕຸນ ແລະ ທ່ານ ຕິ່ງຄຳ ແສງອາໄພ ສຳລັບຮູບແຕ້ມທີ່ສວຍງາມ ເພື່ອປະກອບ ແລະ ເຮັດໃຫ້ ປື້ມຫົວນີ້ມີຊີວິດຊີວາຂື້ນ.

ທ້າຍນີ້ ແມ່ນຂໍສະແດງຄວາມຂອບໃຈ ໄປຍັງສູນຄົ້ນຄ້ວາກະສິກຳສາກົນ ຂອງ ອົດສະຕາລີ (ACIAR) ທີ່ ໃຫ້ທຶນໃນການຈັດພິມ ແລະ ໂດຍສະເພາະ ແມ່ນ ການສົ່ງເສີມຂອງ ທ່ານ Peter Lynch.

# ກ່ອນທີ່ທ່ານຈະເລີ້ມຕົ້ນ . . .

# 1



# ກ່ອນທີ່ທ່ານຈະເລີ່ມຕົ້ນ . . .




ປື້ມຫົວນີ້ ແມ່ນ ໄດ້ຂຽນຂຶ້ນມາ ເພື່ອຊ່ວຍຜູ້ທີ່ຕ້ອງການນຳໃຊ້ ວິທີການເຮັດວຽກແບບມີສ່ວນຮ່ວມ ໃນວຽກງານຂອງເຂົາເຈົ້າ, ແຕ່ຍັງບໍ່ທັນເຂົ້າໃຈວ່າຈະເລີ້ມຕົ້ນແນວໃດ. ປື້ມຫົວນີ້ບໍ່ແມ່ນບົດແນະນຳ ທີ່ ຕ້ອງໄດ້ປະຕິບັດໄປຕາມທຸກຂັ້ນຕອນ ທີ່ ຂຽນໄວ້, ແຕ່ ມັນຄືກັບຫີບທີ່ບັນຈຸບາງແນວຄວາມຄິດ, ບາງຂໍ້ ແນະນຳ ໃນການເຮັດຕົວຈິງ ແລະ ບາງເຄື່ອງມືພື້ນຖານທີ່ຈຳເປັນໃນການເລີ່ມຕົ້ນ ກັບວິທີການແບບມີ ສ່ວນຮ່ວມ.

ຄືກັນກັບຊ່າງໄມ້, ທ່ານຈະຕ້ອງມີທັດສະ ແລະ ຄວາມຊຳນານ ຈຶ່ງຈະສາມາດນຳໃຊ້ເຄື່ອງມືຕ່າງ ໆໄດ້. ປື້ມຫົວນີ້ ແມ່ນ ໄດ້ຕອບສະໜອງບາງແນວຄວາມຄິດ ເພື່ອຊ່ວຍທ່ານໃນການພັດທະນາທັດສະ ແລະ ຄວາມຊຳນານເຫລົ່ານັ້ນ, ແຕ່ຈະບໍ່ໄດ້ ນຳສະເໜີບັນດາເຄື່ອງມືຕ່າງ ໆ ທັງໝົດ ທີ່ ນຳໃຊ້ໃນການເຮັດວຽກແບບມີສ່ວນຮ່ວມ. ພວກເຮົາພຽງແຕ່ນຳສະເໜີ ບາງແນວຄວາມຄິດ, ປະສົບປະການ ແລະ ບາງ ວິທີການ ທີ່ ໄດ້ຮັບຜົນສຳລັບພວກເຮົາ. ສະນັ້ນ, ບໍ່ຄວນຢ້ານທີ່ຈະທົດລອງ ແລະ ນຳໃຊ້ບາງວິທີການ ໃນປື້ມຫົວນີ້ ເພື່ອບັນລຸຄວາມຕ້ອງການ ຂອງ ທ່ານ.

พะນັກງານສົ່ງເສີມສ່ວນໃຫຍ່ ແມ່ນເປັນພະນັກງານແບບທົ່ວໄປ ແລະ ຮັບຜິດຊອບວຽກງານທົດລອງ ແລະ ສົ່ງເສີມທາງດ້ານກະສິກຳທັງຫມົດ ໃນທ້ອງຖິ່ນຂອງເຂົາເຈົ້າ. ຫນ້າວຽກຫລັກຂອງເຂົາເຈົ້າ ແມ່ນ ຊຸກຍູ້ການຜະລິດກະສິກຳ, ເຊັ່ນ ເຂົ້າ, ການລ້ຽງສັດ ແລະ ໄມ້ໃຫ້ຫມາກ. ສະນັ້ນ, ສິ່ງທີ່ທ້າທາຍສຳລັບເຂົາເຈົ້າ ແມ່ນການຊອກຫາເຕັກໂນໂລຊີຕ່າງໆ ທີ່ຈະໃຫ້ຜົນປະໂຫຍດສູງສຸດ ໃນທ້ອງຖິ່ນຂອງ ເຂົາເຈົ້າ.



WS

ແຕ່ພະນັກງານສົ່ງເສີມ ແລະ ຄົ້ນຄ້ວາທົດລອງບາງຄົນ ພັດເປັນພະນັກງານສະເພາະດ້ານເຊັ່ນ ອາຫານສັດ ຫລື ພືດສວນ. ສະນັ້ນ, ສິ່ງທີ່ທ້າທາຍສຳລັບເຂົາເຈົ້າ ແມ່ນການຊອກຫາພື້ນທີ່ ທີ່ເຫມາະສົມ ສຳລັບເຕັກໂນໂລຊີ ແລະ ຄວາມຊຳນານດ້ານໃດນຶ່ງຂອງເຂົາເຈົ້າທີ່ຈະເຮັດໃຫ້ເກີດຜົນປະໂຫຍດ ສູງສຸດ.